# ຂ່າວຄາວທີ ໑ ແລະ ໒

ໃຈຄວາມສຳຄັນ    ການຂາບໄຫວ້ນ້ອມນມັສການ

ຈຳນວນບົດ    ທີ ໑: ໒໙ ບົດ

ທີ ໒: ໓໖ ບົດ

ເຣື່ອງເກີດຂຶ້ນແຕ່ປີ ໑໐໕໕ ຈົນເຖິງ ໕໓໖ ກ່ອນ ຄ.ສ.

## ໑. ຄຳນຳ

ຜູ້ຂຽນໜັງສື ສອງເຫລັ້ມນີ້ ພວກຢູດາ ຄິດວ່າ ແມ່ນ ເອເຊດຣາເຊ ແຕ່ພວກເຮົາຄິດວ່າແມ່ນປະໂລຫິດຫລືຄົນເລວີຜູ້ນຶ່ງ ເພາະຜູ້ຂຽນໄດ້ຂຽນເຣື່ອງກ່ຽວກັບສາສນາເປັນສ່ວນຫລາຍ ແລະໜັງສືນີ້ໄດ້ຂຽນພາຍຫລັງພວກອິສຣາເອັນກັບຄືນມາຈາກເມືອງບາບີໂລນ ເພື່ອສແດງໃຫ້ພວກເຂົາຮູ້ວ່າການປະພຶດປະຕິບັດຕາມພຣະບັນຍັດນັ້ນສຳຄັນທີ່ສຸດ ແລະເປັນຄວາມຈຳເປັນທີ່ຈະຕ້ອງຢູ່ໃຕ້ບັງຄັບຂອງພຣະເຈົ້າ ດັ່ງເຊັ່ນພວກກະສັດທີ່ບໍ່ຍອມເຊື່ອຟັງພຣະເຈົ້າ ພຣະເຈົ້າກໍຊົງລົງໂທດເສັຍ ກັບທັງອານາຈັກຝ່າຍເໜືອກໍໄດ້ເສັຍໄປເພາະພວກກະສັດບໍ່ເຊື່ອຟັງພຣະເຈົ້າ ຜູ້ຂຽນໜັງສືນີ້ ຢາກໃຫ້ ພວກຢູດາ ຜູ້ກັບມາຈາກ ເນຣະເທດ ຮູ້ເນື້ອການງານຂອງພຣະເຈົ້າ

## ໒. ພວກກະສັດທີ່ໄດ້ກະທຳການດີ

໑. ກະສັດອາຊາ ໄດ້ມີການຮ້ອນຮົນໃນການເຊື່ອພຣະເຈົ້າ ແລະໄດ້ທຳລາຍການນົບຮູບຕ່າງ ໆ (ທີ ໒: ບົດ ໑໔–໑໕)

໒. ກະສັດໂບຊາຟາດ ຜູ້ນັບຖືພຣະເຈົ້າຢ່າງດີ
໓. ກະສັດໂບອາເຊ ໄດ້ສ້ອມແຊມພຣະວິຫານ (ບົດ ໒໔)
໔. ກະສັດເອເຊເກັບເຊ ໄດ້ຕັ້ງຄຳປະຕິຍານໃນຄຳອ້ອນວອນໄວ້ກັບພຣະເຢໂຮວາ (ບົດ ໒໗)
໕. ກະສັດໂປເຊັບເຊ (ໂຢຊີຢາ) ໄດ້ຈັດງານເທສການປັສຄາອີ້ມ (ບົດ ໓໔)

ການແບ່ງເປັນພາກ

ຂ່າວຄາວທີ ໑

ພາກທີ ໑ ບົດ ໑–໙ ບັນຊີເຊື້ອວົງຂອງພວກອິສຣາເອັນ ຕັ້ງແຕ່ທ່ານອາດາມ ຈົນເຖິງພວກອິສຣາເອັນຄືນມາຈາກເມືອງບາບີໂລນ

ພາກທີ ໒ ບົດ ໑໐–໒໙ ການສເວີຍຣາຊຂອງກະສັດດາວິດ

ຂ່າວຄາວທີ ໒

ພາກທີ ໓ ບົດ ໑–໙ ການສເວີຍຣາດຂອງກະສັດຊາໂລໂມນ ແລະການກໍ່ສ້າງວິຫານທີ່ເມືອງເຢຣູຊາເລັມ

ພາກທີ ໔ ບົດ ໑໐–໓໖ ເຣື່ອງອານາຈັກຢູດາຝ່າຍໃຕ້ ຈົນເຖິງຄາວອານາຈັກທັງສອງຖືກເນຣະເທດ